# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 6

## Support policies

## ນະໂຍບາຍຊ່ວຍໜູນການລົງທຶນ

1. **ຄວາມໝາຍ ແລະ ບົດບາດຂອງນະໂຍບາຍຊ່ວຍໜູນການລົງທຶນ**

- **ຄວາມໝາຍ:**

ນະໂຍບາຍຊ່ວຍໜູນການລົງທຶນ ໝາຍເຖິງການສົ່ງເສີມການລົງທຶນທາງອ້ອມ, ການກະຕຸ້ນໃຫ້ຜູ້ລົງທຶນມີຄວາມສະດວກສະບາຍ ແລະ ກະຕືລືລົ້ນໃນການລົງທຶນຢູ່ໃນຂະແໜງການຕ່າງໆ, ໂດຍສະເພາະການສະໜອງຂໍ້ມູນຂ່າວສານ ແລະ ການຊ່ວຍໜູນດ້ານປັດໃຈອື່ນໆເຊັ່ນ: ການຍ້ອງຍໍ, ການອະນຸຍາດພັກເຊົາຕາມລະບຽບກົດໝາຍ ຂອງ ສປປ ລາວ ດັ່ງນີ້ເປັນຕົ້ນ.

ດັ່ງນັ້ນ, ນະໂຍບາຍຊ່ວຍໜູນການລົງທຶນແມ່ນການສັງລວມການເຄື່ອນໄຫວຂອງລັດໂດຍຜ່ານການນຳໃຊ້ເຄື່ອງມື, ມາດຕະການທີ່ສອດຄ່ອງເພື່ອຊຸກຍູ້ສົ່ງເສີມການລົງທຶນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງລັດທີ່ມີການລົງທຶນໃຫ້ມີປະສິດທິຜົນ, ໂດຍມີການກະຕຸ້ນໃຫ້ມີການລົງທຶນຫຼາຍຂຶ້ນ.

ນະໂຍບາຍຊ່ວຍໜູນການລົງທຶນໃນກົດໝາຍສົ່ງເສີມການລົງທຶນຢູ່ ສປປ ລາວ ສະບັບປີ 2016 ມາດຕາ 17 ໄດ້ກຳນົດມີ 02 ຮູບການຄື: ນະໂຍບາຍຊ່ວຍໜູນດ້ານຂໍ້ມູນຂ່າວສານ ແລະ ນະໂຍບາຍຊ່ວຍໜູນອື່ນ.

- **ບົດບາດ:**

ການຊ່ວຍໜູນການລົງທຶນແມ່ນແນໃສ່ຊຸກຍູ້ສົ່ງເສີມ, ສ້າງຄວາມສະດວກໃຫ້ແກ່ການເຄື່ອນໄຫວການລົງທຶນຕາມຂະແໜງການ, ເຂດໃຫ້ສອດຄ່ອງກັບແຜນຍຸດທະສາດ, ແຜນການ ແລະ ຈຸດປະສົງໃນການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ; ຮັບປະກັນການຈັດຕັ້ງບັນດາໂຄງການການລົງທຶນ.

ການຊ່ວຍໜູນການລົງທຶນແມ່ນເຄື່ອງມືທີ່ສ້າງຄວາມເຂັ້ມແຂງ ແລະ ສົ່ງຜົນສະທ້ອນຕໍ່ການກຳນົດທິດທາງໃຫ້ຜູ້ລົງທຶນ ແລະ ແມ່ນຮູບການໂຄສະນາເຜີຍແຜ່ໃຫ້ມີການລົງທຶນຫຼາຍຂຶ້ນ. ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າການຊ່ວຍໜູນການລົງທຶນແມ່ນເຄື່ອງມືດຶງດູດການລົງທຶນ ແລະ ປະຕິບັດນະໂຍບາຍການລົງທຶນ, ໄດ້ສົ່ງຜົນສະທ້ອນເຖິງການຊຸກຍູ້ໃຫ້ແກ່ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ພ້ອມດຽວກັນນັ້ນກໍແມ່ນປັດໃຈທີ່ສຳຄັນໃນການຜັນຂະຫຍາຍທ່າແຮງໃນການລົງທຶນ ໂດຍສະເພາະໃນໄລຍະທີ່ພື້ນຖານເສດຖະກິດພວມກຳລັງຢູ່ໃນການພັດທະນາ.

ດັ່ງນັ້ນ, ນະໂຍບາຍຊ່ວຍໜູນການລົງທຶນແມ່ນການສັງລວມການເຄື່ອນໄຫວຂອງລັດໂດຍຜ່ານການນຳໃຊ້ເຄື່ອງມື, ມາດຕະການທີ່ສອດຄ່ອງເພື່ອຊຸກຍູ້ສົ່ງເສີມການລົງທຶນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງລັດທີ່ມີການລົງທຶນໃຫ້ມີປະສິດທິຜົນ, ໂດຍມີການກະຕຸ້ນໃຫ້ມີການລົງທຶນຫຼາຍຂຶ້ນໃຫ້ແທດເໝາະກັບສະພາບການຂະຫຍາຍຕົວຂອງ

ສັງຄົມ ຕາມທິດທາງການຂະຫຍາຍຕົວ ແລະ ສ້າງວຽກເຮັດງານທຳໃຫ້ແກ່ປະຊົນ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂື້ນ.

**2. ນະໂຍບາຍຊ່ວຍໜູນການລົງທຶນດ້ານຂໍ້ມູນຂ່າວສານ**

ນະໂຍບາຍດ້ານຂໍ້ມູນຂ່າວສານ ໝາຍຄວາມວ່າລັດຖະບານສົ່ງເສີມດ້ານຂໍ້ມູນຂ່າວສານແກ່ຜູ້ລົງທຶນໃຫ້ສາ ມາດເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບການລົງທຶນ ຫຼື ເອີ້ນວ່ານະໂຍບາຍຊ່ວຍໜູນການລົງທຶນ ຕາມທີ່ໄດ້ກຳນົດ ໄວ້ໃນກົດໝາຍສົ່ງເສີມການລົງທຶນປີ 2016[1] ໄດ້ຢ່າງສະດວກ, ວ່ອງໄວ ຜູ້ລົງທຶນພາຍໃນ, ຜູ້ລົງທຶນຕ່າງປະເທດ ແລະ ວິສາຫະກິດສາມາດຮັບຮູ້ຂໍ້ມູນຂ່າວສານການລົງທຶນ ຜ່ານລະບົບເວັບໄຊ ແລະ ຈາກຫ້ອງການບໍລິການການລົງ ທຶນປະຕູດຽວ ນຳຂະແໜງແຜນການ ແລະ ການລົງທຶນ, ຂະແໜງອຸດສາຫະກຳ ແລະ ການຄ້າຂັ້ນສູນກາງ ແລະ ທ້ອງຖິ່ນ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ, ສະຖານທູດລາວ, ກົງສຸນລາວ ຫຼື ຫ້ອງການຜູ້ ຕາງໜ້າດ້ານການຄ້າລາວປະຈຳຢູ່ຕ່າງປະເທດ.

ເພື່ອຮັບປະກັນໃຫ້ຜູ້ລົງທຶນໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການລົງທຶນຢ່າງຄົບຖ້ວນ, ເອກະພາບ, ວ່ອງໄວ, ທັນການ ແລະ ສາມາດຕັດສິນໃຈລົງທຶນໄດ້ນັ້ນ ຕ້ອງສ້າງຂໍ້ມູນຂ່າວສານການລົງທຶນຢູ່ໃນຫ້ອງການບໍລິການການລົງທຶນປະຕູດຽວທີ່ກ່ຽວຂ້ອງ.

ສູນຂໍ້ມູນຂ່າວສານການລົງທຶນ ເປັນຜູ້ເກັບກຳ ແລະ ສັງລວມບັນດາຂໍ້ມູນກ່ຽວກັບການລົງທຶນ ເພື່ອສ້າງເຄືອຂ່າຍ, ສະໜອງ ແລະ ແລກປ່ຽນຂໍ້ມູນຂ່າວສານ ປັນຕົ້ນ ການໂຄສະນາຜ່ານລະບົບເວັບໄຊ, ປື້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ອື່ນໆ ກ່ຽວກັບການລົງທຶນ ໃຫ້ຜູ້ທີ່ມີຄວາມສົນໃຈ, ສະຖານທູດ, ກົງສູນລາວ ຫຼື ຫ້ອງ ການຜູ້ຕາງໜ້າທາງດ້ານການຄ້າລາວ ປະຈຳຢູ່ຕ່າງປະເທດ ເພື່ອສະໜອງໃຫ້ຜູ້ທີ່ຕ້ອງການມາລົງທຶນ.




[1] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີII , ໝວດ ທີ 2, ມາດຕາ 18

**3. ນະໂຍບາຍຊ່ວຍໜູນການລົງທຶນ ໂດຍຜ່ານການປັບປຸງລະບຽບການ ແລະ ກົນໄກການປະສານງານ**

ເພື່ອປັບປຸງບັນຍາກາດໃນການດຳເນີນທຸລະກິດຢູ່ ສປປ ລາວ ໃຫ້ດີຂຶ້ນ ແນໃສ່ຍາດແຍ່ງ ແລະ ດຶງດູດເອົາການລົງທຶນທີ່ມີຄຸນນະພາບ, ຊຸກຍູ້ສົ່ງເສີມ ແລະ ສ້າງຂີດຄວາມອາດສາມາດໃນການແຂ່ງຂັນທຸລະກິດພາຍໃນໃຫ້ສູງຂຶ້ນກໍຄືການແກ້ໄຂຄວາມທຸກຍາກຂອງການດຳເນີນທຸລະກິດຢູ່ພາຍໃນປະເທດໃຫ້ຫຼຸດລົງແບບກະໂດດ ໂດຍການຫຼຸດຜ່ານຂັ້ນຕອນ ແລະ ເວລາໃນການອະນຸຍາດຕ່າງໆຂອງຂະແໜງທີ່ກ່ຽວຂ້ອງໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ມີຜົນສັກສິດ, ຫຼຸດຜ່ອນຕົ້ນທຶນໃນການດຳເນີນກິດຈະການຂອງພາກທຸລະກິດ ແລະ ເຮັດໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດເຊື່ອໝັ້ນ ແລະ ຕັດສິນໃຈເຂົ້າມາດຳເນີນ ແລະ ຂະຫຍາຍທຸລະກິດຢູ່ ສປປ ລາວ ໃຫ້ນັບມື້ນັບຫຼາຍ ກາຍເປັນກຳລັງແຮງທີ່ສຳຄັນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະໃຫ້ບັນລຸຄາດໝາຍທີ່ວາງໄວ້, ສ້າງພື້ນຖານເສດຖະກິດແຫ່ງຊາດ ຂອງ ສປປ ລາວ ໃຫ້ເຕີບໂຕຢ່າງໜັກແໜ້ນ,ໝັ້ນທ່ຽງ,ຕາມທິດຍືນຍົງ ແລະ ສີຂຽວ.

ນະໂຍບາຍດັ່ງກ່າວນີ້, ໄດ້ສະແດງອອກຜ່ານຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ດັ່ງນີ້:

"ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນໃນຂອບເຂດທົ່ວປະເທດ ທີ່ມີພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຂອບເຂດສິດທີ່ຕິດພັນໂດຍກົງບັນດາຕົວຊີ້ວັດຄວາມສະດວກຂອງການດຳເນີນທຸລະກິດຢູ່ ສປປ ລາວ ຈັດຕັ້ງປະຕິບັດແກ້ໄຂ,ຫຼຸດຂອດ ແລະ ໄລຍະເວລາຂອງການອອກອະນຸຍາດຕ່າງໆ; ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ, ການແກ້ໄຂ, ຫຼຸດຂັ້ນຕອນ ແລະ ໄລຍະເວລາຂອງການອະນຸຍາດຕ່າງໆ"[2].

**4. ການຊ່ວຍໜູນການລົງທຶນດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າຢູ່ ສປປ ລາວ**

ເພື່ອປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານແຫ່ງ ສປປ ລາວໃນການປັບປຸງບັນຍາກາດການດຳເນີນທຸລະກິດຢູ່ ສປປ ລາວໃຫ້ດີຂຶ້ນ ແລະ ຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ພາຍໃນປະເທດ, ຫຼີກລ້ຽງການສ້າງອຸປະສັກທາງດ້ານການຄ້າ ແນໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຢູ່ ສປປ ລາວ, ບັນຫາດັ່ງກ່າວນີ້ ລັດຖະບານລາວໄດ້ອອກຄຳສັ່ງດັ່ງນີ້:

+ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນໃນຂອບເຂດທົ່ວປະເທດທີ່ມີພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຂອບເຂດສິດທີ່ຕິດພັນໂດຍກົງການອອກອະນຸຍາດ, ການຢັ້ງຢືນສຳລັບການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ ແລະ ການຜ່ານແດນ ສິນຄ້າ ຈັດຕັ້ງປະຕິບັດແກ້ໄຂ, ຫຼຸດຂັ້ນຂອດ ແລະ ໄລຍະເວລາ ( ລາຍລະອຽດໄດ້ກຳນົດໃນຄຳສັ່ງຂອງນາຍົກລັດຖະມົນຕີ )[3];

---

[2] ຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ສະບັບເລກທີ 02/ນຍ,ລົງວັນທີ 01ກຸມພາ 2018 ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ.

[3] ຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ສະບັບເລກທີ 12/ນຍ, ລົງວັນທີ 16ຕຸລາ 2019 ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍ ສິນຄ້າ ຢູ່ ສປປ ລາວ.

+ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນໃນຂອບເຂດທົ່ວປະເທດທີ່ມີພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຂອບເຂດສິດທີ່ຕິດພັນໂດຍກົງການເຄື່ອນຍ້າຍສິນຄ້າພາຍໃນປະເທດ ຈັດຕັ້ງປະຕິບັດການແກ້ໄຂ,ຫຼຸດຂັ້ນຂອດ ແລະ ໄລຍະເວລາ.

**5. ນະໂຍບາຍຊ່ວຍໜູນການລົງທຶນໂດຍຜ່ານການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ**

ເພື່ອຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍທີ່ກ່ຽວຂ້ອງໃຫ້ຖືກຈັດຕັ້ງປະຕິບັດຢ່າງວ່ອງໄວ ແລະ ຈະແຈ້ງ ໂດຍສະເພາະການປັບປຸງລະບົບການບໍລິການ ການລົງທຶນປະຕູດຽວ ແລະ ການດຳເນີນທຸລະກິດຢູ່ ສປປ ລາວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ເປັນເອກະພາບໃນການສົ່ງເສີມ, ຄຸ້ມຄອງການລົງທຶນ ແລະ ການອຳນວຍຄວາມສະດວກໃນການດຳເນີນທຸລະກິດທັງພາຍໃນ ແລະ ຕ່າງປະເທດ ໃນຂອບເຂດທົ່ວປະເທດ , ຍົກລະດັບຄວາມສັກສິດໃນການປະຕິບັດກົດໝາຍ, ເພີ່ມທະວີຄວາມອາດສາມາດໃນການແຂ່ງຂັນດຶງດູດການລົງທຶນ ແລະ ເພື່ອເຮັດໃຫ້ການລົງທຶນຂອງພາກເອກະຊົນສາມາດປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ລັດຖະບານແຫ່ງ ສປປ ລາວ ໄດ້ວາງລະບຽບການໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນໃນຂອບເຂດທົ່ວປະເທດທີ່ມີຄວາມຮັບຜິດຊອບກ່ຽວກັບການສົ່ງການລົງທຶນ,ການບໍລິການ ກາາລົງທຶນຢູ່ແຕ່ລະຂະແໜງການ ແລະ ໜ່ວຍງານທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ຮີບຮ້ອນແກ້ໄຂບັນດາຂອດຂັ້ນ, ກຳນົດເວລາ ແລະ ສິ່ງກີດຂວາງທີ່ເປັນອຸປະສັກແກ່ການອະນຸຍາດລົງທຶນ ແລະ ການດຳເນີນທຸລະກິດຢູ່ ສປປ ລາວ ( ລາຍລະອຽດໄດ້ກຳນົດໃນຄຳສັ່ງຂອງນາຍົກລັດຖະມົນຕີ )[4].

**6. ການຊ່ວຍໜູນການລົງທຶນດ້ວຍການອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດ**

ເນື່ອງຈາກປັດຈຸບັນຄົນຕ່າງປະເທດທີ່ເຂົ້າມາເຄື່ອນໄຫວແບບບໍ່ຖືກຕ້ອງຢູ່ ສປປ ລາວແມ່ນຍັງມີຈຳນວນຫຼາຍ ແລະ ເພີ່ມຂຶ້ນ ເຮັດໃຫ້ເກີດຄວາມບໍ່ເປັນລະບຽບຮຽບຮ້ອຍ ແລະ ສ້າງຄວາມຫຍຸ້ງຍາກໃນການຄຸ້ມຄອງ.

ເພື່ອເຮັດໃຫ້ບັນຫາດັ່ງກ່າວໄດ້ຮັບການແກ້ໄຂໃນທາງທີ່ດີຂຶ້ນ, ແນໃສ່ເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງແຮງງານເຄື່ອນຍ້າຍ, ລັດຖະບານຈຶ່ງໄດ້ມອບໃຫ້ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຂະແໜງປ້ອງກັນຄວາມສະຫງົບຮ່ວມກັນດຳເນີນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດທີ່ຍັງເຄື່ອນໄຫວແບບບໍ່ຖືກຕ້ອງຢູ່ ສປປ ລາວ ພ້ອມດຽວກັນນັ້ນກໍເພື່ອເຮັດໃຫ້ທຸກຄົນ, ທຸກພາກສ່ວນທີ່ກ່ຽວຂ້ອງອຳນວຍຄວາມສະດວກ ແລະ ເຂົ້າຮ່ວມຢ່າງຕັ້ງໜ້າໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດດັ່ງກ່າວ ( ລາຍລະອຽດໄດ້ກຳນົດໃນຄຳສັ່ງຂອງນາຍົກລັດຖະມົນຕີ )[5].

---

[4] ຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ,ສະບັບເລກທີ 03/ນຍ, ລົງວັນທີ 21ມັງກອນ 2020 ວ່າດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດການລົງທຶນ ແລະ ການອອກໃບອະນຸຍາດການດຳເນີນທຸລະກິດ.

[5] ຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ,ສະບັບເລກທີ 62/ນຍ, ລົງວັນທີ 13ພະຈິກ 2015 ວ່າດ້ວຍການອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການຂຶ້ນທະບຽນ ແລະ ອອກບັດອະນຸຍາດເຄື່ອນໄຫວຊົ່ວຄາວໃຫ້ຄົນຕ່າງປະເທດ.

**7. ການຊ່ວຍໜູນການລົງທຶນດ້ວຍການອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດຢູ່ ສປປ ລາວ**

ລັດຖະບານ ແຫ່ງ ສປປ ລາວ ໄດ້ມີນະໂຍບາຍຊ່ວຍໜູນການລົງທຶນດ້ວຍຮູບການອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດຢູ່ ສປປ ລາວ ໂດຍການກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການເຄື່ອນໄຫວ, ການສ້າງຕັ້ງ ແລະ ການຄຸ້ມຄອງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດຢູ່ ສປປລາວ, ເພື່ອຮັບປະກັນເງື່ອນໄຂດຶງດູດ ແລະ ສົ່ງເສີມການລົງທຶນຂອງຕ່າງປະເທດ ຢູ່ ສປປ ລາວ ຕາມນະໂຍບາຍການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະໃຫ້ນັບມື້ຫຼາຍຂຶ້ນ, ແນໃສ່ຊຸກຍູ້ສົ່ງເສີມຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນຕ່າງປະເທດ.

ຫ້ອງການຜູ້ຕາງໜ້າຕາມຄວາມໝາຍຂອງລາວ ແມ່ນຫ້ອງການປະສານງານ ຕາງໜ້າໃຫ້ບໍລິສັດແມ່ຢູ່ຕ່າງປະເທດໃນການດຳເນີນການສຶກສາຊ່ອງທາງການລົງທຶນ, ສຶກສາຂໍ້ມູນດ້ານການຄ້າ, ການບໍລິການ, ໃຫ້ຄຳປຶກສາ ແລະ ປະສານງານໃຫ້ກຸ່ມບໍລິສັດເຄືອຄ່າຍ ຫຼື ສາຂາ, ພົວພັນກັບພາກສ່ວນຕ່າງໆທັງພາກລັດ ແລະ ເອກະຊົນ ຢູ່ ສປປ ລາວ ເພື່ອກະກຽມສ້າງຕັ້ງ ແລະ ພັດທະນາກິດຈະການລົງທຶນຢູ່ ສປປ ລາວ, ຕິດຕາມການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາທີ່ບໍລິສັດຢູ່ຕ່າງປະເທດໄດ້ເຊັນກັບລັດຖະບານໃນໂຄງການສຳປະທານເທົ່ານັ້ນ, ສ່ວນສັນຍາອື່ນແມ່ນບໍ່ຖືເປັນເງື່ອນໄຂໃນການສ້າງຕັ້ງຫ້ອງການຜູ້ຕາງໜ້າ[6].

**8. ນະໂຍບາຍຊ່ວຍໜູນອື່ນໆ**

ສຳລັບຜູ້ລົງທຶນທີ່ໄດ້ປະຕິບັດພັນທະຕໍ່ລັດຢ່າງຄົບຖ້ວນ, ທັນເວລາ, ປະກອບສ່ວນພັດທະນາສັງຄົມລາວ, ເອົາໃຈໃສ່ແກ້ໄຂບັນຫາສິ່ງແວດລ້ອມ, ພັດທະນາສີມືແຮງງານລາວ ໂດຍມີການຢັ້ງຢືນຈາກພາກສ່ວນ ຂອງລັດຈະ ໄດ້ຮັບການພິຈາລະນາຍ້ອງຍໍຈາກລັດຖະບານດ້ວຍຫຼາຍຮູບແບບທີ່ເໝາະສົມ ຊຶ່ງສາມາດເວົ້າໄດ້ວ່າ ເປັນສິ່ງຊ່ວຍໜູນດ້ານການລົງທຶນ, ເຮັດໃຫ້ຜູ້ລົງທຶນມີກຳລັງໃຈຢາກຈະສືບຕໍ່ດຳເນີນການລົງທຶນຕໍ່ໄປ.

ການເອື້ອອຳນວຍຄວາມສະດວກອະນຸຍາດ ດ້ານການພັກເຊົາສຳລັບຜູ້ລົງທຶນຕ່າງປະເທດ, ອຳນວຍຄວາມສະດວກໃນການເຂົ້າ-ອອກປະເທດຕາມໄລຍະເວລາຂອງການລົງທຶນລວມການນະໂຍບາຍດ້ານການໃຫ້ວິຊາກໍແມ່ນນະໂຍບາຍຊ່ວຍໜູນການລົງທຶນ, ລັດຖະບານເປັນຜູ້ກຳນົດລະອຽດກ່ຽວກັບການຊ່ວຍໜູນການລົງທຶນ, ມາດຕາ 19 ກົດໝາຍສົ່ງເສີມການລົງທຶນກໍໄດ້ກຳນົດກ່ຽວກັບບັນຫານີ້.

ນະໂຍບາຍຊ່ວຍໜູນອື່ນຍັງກວມເອົາບັນຫາຕ່າງໆຄື:

1) ໄດ້ຮັບການພິຈາລະນາ ຍ້ອງຍໍຈາກລັດຖະບານ ດ້ວຍຫຼາຍຮູບການທີ່ເໝາະສົມ ສຳລັບຜູ້ລົງທຶນທີ່ໄດ້ປະຕິບັດພັນທະຕໍ່ລັດຢ່າງຄົບຖ້ວນ, ທັນເວລາ, ປະກອບສ່ວນພັດທະນາຊຸມຊົນ, ສັງຄົມເອົາໃຈໃສ່ແກ້ໄຂສິ່ງແວດລ້ອມ , ພັດທະນາສີມືແຮງງານລາວ ໂດຍມີການຢັ້ງຢືນຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ນີ້ແມ່ນນະໂຍບາຍຊ່ວຍໜູນການລົງທຶນໜຶ່ງ ທີ່ສຳຄັນໃນການກະຕຸກຊຸກຍູ້ໃຫ້ນັກລົງທຶນເອົາໃຈໃສ່ປະຕິບັດພັນທະຂອງ

[6] ຂໍ້ຕົກລົງຂອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 1815/ກຜທ, ລົງວັນທີ 30 ກໍລະກົດ 2018 ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດຢູ່ ສປປ ລາວ, ມາດຕາ 2.

ຕົນຢ່າງເຂັ້ມງວດ ແລະ ຄົບຖ້ວນ, ບໍ່ມີການລະເມີດຕໍ່ລະບຽບການ ແລະ ກົດໝາຍຈະໄດ້ຮັບການຍ້ອງຍໍຈາກລັດຖະບານຕາມຄວາມເໝາະສົມ;

2) ໄດ້ຮັບຄວາມສະດວກໃນການຂໍອະນຸຍາດພັກເຊົາ ແລະ ວິຊ່າ ທຸລະກິດເຂົ້າ-ອອກ ຫຼາຍເທື່ອສຳລັບຜູ້ລົງທຶນຕ່າງ ປະເທດຕາມໄລຍະຂອງການລົງທຶນຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ, ນັກວິຊາການ, ຜູ້ຊ່ຽວ ຊານຕ່າງປະເທດໄດ້ຮັບຄວາມສະດວກໃນການເຂົ້າ-ອອກ ສປປ ລາວ ລວມທັງຂໍວິຊ່າເຂົ້າ-ອອກຫຼາຍເທື່ອ ຊຶ່ງແຕ່ລະ ຄັ້ງບໍ່ໃຫ້ເກີນ **5** ປີ, ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ຈະມີລະບຽບການລະອຽດກ່ຽວກັບບັນຫານີ້.

3) ກໍລະນີ ມີຄວາມຈຳເປັນຕ້ອງໃຫ້ນະໂຍບາຍສົ່ງເສີມພິເສດເພີ່ມເຕີມ ໃນບາງຂະແໜງການ, ບາງເຂດນັ້ນ ລັດຖະບານນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ຫຼື ສະພາແຫ່ງຊາດ ພິຈາລະນາ ແລະ ຕົກລົງ[7], ເພາະນີ້ຖືເປັນຫາສຳຄັນ ແລະ ຈຳເປັນຂອງຊາດ ຕາມຫຼັກການແລ້ວຕ້ອງໄດ້ຮັບການພິຈາລະນາຮັບຮອງຈາກສະພາແຫ່ງຊາດ;

4) ໄດ້ຮັບການຊ່ວຍເຫຼືອ ຫຼື ການແນະນຳຈາກລັດທາງດ້ານວິຊາການ ເພື່ອກະຕຸກຊຸກຍູ້ໃຫ້ແກ່ການຂະແໜງການລົງທຶນສາມາດເຂົ້າໃຈ ແລະ ຮູ້ວິທີການດຳເນີນກິດຈະການຂອງຕົນຢ່າງຖືກຕ້ອງ ແລະ ມີປະສິດທິຜົນ;

5) ໄດ້ຮັບການອຳນວຍຄວາມສະດວກຈາກລັດໃນການຜະລິດ ແລະ ດຳເນີນທຸລະກິດ ເປັນຕົ້ນແມ່ນສ້າງສະພາບແວດລ້ອມທີ່ດີ, ຄວາມສະຫງົບ, ປອດໄພ;

6) ຜູ້ລົງທຶນສາມາດສົ່ງລາຍໄດ້ ແລະ ທຶນຈາກການລົງທຶນຂອງຕົນກັບຄືນປະເທດ ໂດຍຜ່ານທະນາຄານຂອງ ສປປ ລາວ ພາຍຫຼັງເສຍອາກອນລາຍໄດ້ ແລະ ຄ່າທຳນຽມຕ່າງໆ, ນີ້ແມ່ນໝາກຜົນສຸດທ້າຍ ທີ່ນັກລົງທຶນຕ່າງປະເທດມີຄວາມມຸ້ງຫວັງສົ່ງຜົນກຳໄລ ຫຼື ທຶນຂອງຕົນເອງກັບຄືນປະເທດພາຍຫຼັງທີ່ໄດ້ປະຕິບັດພັນທະຂອງຕົນຢ່າງຄົບຖ້ວນຕາມສັນຍາ ແລະ ກົດໝາຍຂອງ ສປປ ລາວ, ທະນາຄານແຫ່ງ ສປປ ລາວ ເປັນເສນາທິການໃຫ້ແກ່ລັດຖະບານໃນການເອື້ອອຳນວຍຄວາມສະດວກດ້ວຍຄວາມໂປ່ງໃສ, ວ່ອງໄວ ແລະ ເປັນທຳຕໍ່ທຸກຝ່າຍ.

**9. ການຈັດຕັ້ງປະຕິບັດການໃຫ້ນະໂຍບາຍຊ່ວຍໜູນ ຫຼື ສົ່ງເສີມການລົງທຶນ**

ນິຕິບຸກຄົນ ທີ່ມີເງື່ອນໄຂໄດ້ຮັບນະໂຍບາຍສົ່ງເສີມ ແລະ ຊ່ວຍໜູນການລົງທຶນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍສະບັບນີ້ ສາມາດຍື່ນຄຳຮ້ອງຕໍ່ ຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອສະເໜີຂໍໃບສົ່ງເສີມການລົງທຶນ ຫຼື ຊ່ວຍໜູນການລົງທຶນຕາມຄວາມເໝາະສົມ ແລະ ຕາມລະບຽບການທີ່ກຳນົດໄວ້.

ການຈັດຕັ້ງປະຕິບັດກົນໄກໃຫ້ນະໂຍບາຍອື່ນ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງໄດ້ຕິດຕາມ ແລະ ຢັ້ງຢືນຕໍ່ຜົນງານການປະກອບສ່ວນຂອງຫົວໜ່ວຍທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ **19** ຂໍ້ **1** ຂອງກົດໝາຍສະບັບນີ້ເພື່ອໃຫ້ ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄວ້າ ສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນຂອງຕົນ ພິຈາລະນາຍ້ອງຍໍ ຫຼື ໃຫ້ນະໂຍບາຍສົ່ງເສີມອື່ນ ຕາມລະບຽບການ.

**References:**


1. ກົດໝາຍສົ່ງເສີມການລົງທຶນ 2016;
2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;


[7] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີII , ໝວດທີ 2, ມາດຕາ 19

3. ຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ສະບັບເລກທີ 02/ນຍ,ລົງວັນທີ 01ກຸມພາ 2018 ວ່າດ້ວຍ ການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ;
4. ຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ສະບັບເລກທີ 12/ນຍ, ລົງວັນທີ 16ຕຸລາ 2019 ວ່າດ້ວຍ ການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການ ເຄື່ອນຍ້າຍ ສິນຄ້າ ຢູ່ ສປປ ລາວ;
5. ຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ,ສະບັບເລກທີ 03/ນຍ, ລົງວັນທີ 21ມັງກອນ 2020 ວ່າ ດ້ວຍການປັບປຸງວຽກງານການບໍລິການ ການອອກໃບອະນຸຍາດການລົງທຶນ ແລະ ການອອກໃບອະນຸຍາດ ການດຳເນີນທຸລະກິດ;
6. ຂໍ້ຕົກລົງຂອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 1825/ກຜທ, ລົງວັນທີ 30 ກໍລະກົດ 2018 ວ່າດ້ວຍການ ສ້າງຕັ້ງ ແລະ ຄຸ້ມຄອງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດຢູ່ ສປປ ລາວ.